**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງກະສິກຳ ແລະ ປ່າໄມ້ ເລກທີ 2896 /ກປ

ນະຄອນຫຼວງວຽງຈັນ, ວັນທີ 14 JUN 2023

# ແຈ້ງການ

**ເຖິງ:** - ຫ້ອງການ, ບັນດາກົມ, ສະຖາບັນ ແລະ ສູນ ອ້ອມຂ້າງກະຊວງກະສິກຳ ແລະ ປ່າໄມ້.
- ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງວຽງຈັນ.

**ເລື່ອງ:** ລາຍຊື່ພະຍາດສັດ ທີ່ຈຳເປັນຕ້ອງແຈ້ງ ຢູ່ ສປປ ລາວ.

- ອີງຕາມ ກົດໝາຍ ວ່າດ້ວຍການລ້ຽງສັດ ແລະ ການສັດຕະວະແພດ (ສະບັບປັບປຸງ) ສະບັບເລກທີ 08/ສພຊ, ລົງວັນທີ 11 ພະຈິກ 2016;
- ອີງຕາມ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 603/ນຍ, ລົງວັນທີ 15 ຕຸລາ 2021;
- ອີງຕາມ ຖານຂໍ້ມູນຂອງອົງການສຸຂະພາບສັດສາກົນ (World Organization for Animal Health (WOAH)) ປີ 2022;
- ອີງຕາມ ໜັງສືສະເໜີຂອງກົມລ້ຽງສັດ ແລະ ການປະມົງ ສະບັບເລກທີ 0300/ກລປ, ລົງວັນທີ 07 ກຸມພາ 2023;
- ອີງຕາມ ການຄົ້ນຄວ້າ ແລະ ນຳສະເໜີ ຂອງຫ້ອງການກະຊວງກະສິກຳ ແລະ ປ່າໄມ້ ລົງວັນທີ 05 ມິຖຸນາ 2023.

ກະຊວງກະສິກຳ ແລະ ປ່າໄມ້ ຂໍຖືເປັນກຽດແຈ້ງມາຍັງທ່ານ ຊາບວ່າ: ສປປ ລາວ ແມ່ນໜຶ່ງໃນ 182 ປະເທດ ທີ່ເປັນສະມາຊິກ ຂອງອົງການສຸຂະພາບສັດສາກົນ (WOAH) ຊຶ່ງບັນດາປະເທດສະມາຊິກ ຕ້ອງໄດ້ລາຍງານພະຍາດສັດ ທີ່ຈຳເປັນຕ້ອງແຈ້ງ ໃຫ້ອົງການດັ່ງກ່າວຮັບຊາບ ຢ່າງເປັນປົກກະຕິ. ພະຍາດສັດທີ່ຈຳເປັນຕ້ອງແຈ້ງ ແມ່ນພະຍາດສັດ ທີ່ສາມາດຕິດຕໍ່ຈາກສັດສູ່ສັດ ຫຼື ຈາກສັດສູ່ຄົນ ຊຶ່ງມີການແຜ່ລາມໄວ, ສ້າງຜົນກະທົບທາງລົບຕໍ່ຊີວິດ, ເສດຖະກິດ, ສັງຄົມ ແລະ ສິ່ງແວດລ້ອມ. ໃນກໍລະນີ ເກີດມີການລະບາດພະຍາດສັດໃດໜຶ່ງທີ່ຈຳເປັນຕ້ອງແຈ້ງ ແມ່ນບໍ່ສາມາດນຳສັດ ທີ່ເປັນພະຍາດໄປ ຂາຍ ຫຼື ຂ້າ ເພື່ອບໍລິໂພກ ແລະ ປະເທດຄູ່ຄ້າ ກໍ່ຈະປະຕິເສດການນຳເຂົ້າສັດປະເພດດັ່ງກ່າວ ຊຶ່ງ ສົ່ງຜົນກະທົບອັນໃຫຍ່ຫຼວງຕໍ່ການລ້ຽງສັດ ແລະ ເສດຖະກິດ.

ສະນັ້ນ, ເພື່ອໃຫ້ມີຄວາມເປັນເອກະພາບໃນການເຝົ້າລະວັງພະຍາດສັດ ຂອບເຂດທົ່ວປະເທດ ແລະ ສອດຄ່ອງ ກັບລະບົບເຝົ້າລະວັງພະຍາດສັດ ຂອງອົງການສຸຂະພາບສັດສາກົນ.

## ກະຊວງກະສິກຳ ແລະ ປ່າໄມ້ ອອກແຈ້ງການ:

1. ແຈ້ງໃຫ້ທຸກພາກສ່ວນຊາບ ແລະ ພ້ອມກັນຈັດຕັ້ງປະຕິບັດກ່ຽວກັບ ບັນຊີລາຍຊື່ພະຍາດສັດ ທີ່ຈຳເປັນຕ້ອງ ແຈ້ງ ຈຳນວນ 117 ພະຍາດສັດ ແລະ ສັດນ້ຳ ຢ່າງເຂັ້ມງວດ ໃນນີ້, ມີພະຍາດສັດບົກ 86 ຊະນິດ ແລະ ພະຍາດ ສັດນ້ຳ 31 ຊະນິດ ດັ່ງລາຍລະອຽດ ລຸ່ມນີ້:

### 1) ພະຍາດສັດຕິດຕໍ່ໃສ່ສັດຫຼາຍຊະນິດ (Multiple Species Diseases)

| ລ/ດ | ລາຍຊື່ພະຍາດ |
|---|---|
| 1 | Anthrax (ພະຍາດໄຂ້ເລືອດດຳ) |
| 2 | Crimean Congo hemorrhagic fever (ພະຍາດໄຂ້ເຕົ້າໂຮມເລືອດ ຄຣີແມນ-ຄອງໂກ) |
| 3 | Equine encephalomyelitis (Eastern) (ພະຍາດສະໝອງອັກເສບມ້າ (ຕາເວັນອອກ)) |
| 4 | Heartwater (ພະຍາດພົກນ້ຳຫົວໃຈ) |
| 5 | Trypanosomiase (ພະຍາດໂປໂຕຊົວ ຕຼີປາໂນໂຊມມາ) |
| 6 | Aujeszky's disease (ພະຍາດອໍ້ທຽມ) |
| 7 | Bluetongue (ພະຍາດລີ້ນກ່ຳ) |
| 8 | Brucellosis (ພະຍາດແທ້ງລູກຕິດຕໍ່) |
| 9 | Echinococcus granulosus (ພະຍາດແມ່ກາຝາກໂຕແປ ອີຄີໂນໂກກັດສ ແກຣນນູໂລຊູດ) |
| 10 | Echinococcosis multilocularis (ພະຍາດແມ່ກາຝາກໂຕແປ ອີຄີໂນໂກກັດສ ເມົາຕິໂລກຸຍລາຣິດ) |
| 11 | Epizootic hemorrhagic disease virus (ພະຍາດເຕົ້າໂຮມເລືອດຕິດແປດໄວຣັດ) |
| 12 | Foot and mouth disease (ພະຍາດປາກເປື່ອຍລີ້ງເລັບ) |
| 13 | Mycobacterium Tuberculosis complex (ວັນນະໂຣກ) |
| 14 | Rabies (ພະຍາດວໍ້) |
| 15 | Rift Valley fever (ພະຍາດໄວຣັດລິບວອນເລ້) |
| 16 | Rinderpest (ອະຫິວາງົວ, ຄວາຍ) |
| 17 | Trichinellosis (ພະຍາດລໍຊໍ່) |
| 18 | Japanese encephalitis (ໄຂ້ສະໝອງອັກເສບຍີ່ປຸ່ນ) |
| 19 | New world screwworm (Cochliomyia hominivorax) (ພະຍາດກາຝາກໜອນແມງວັນ ໂຄຈີໂອເມຍ ໂຮມີນີວໍແຣັກ) |
| 20 | Old world screwworm (Chrysomya bezziana) (ພະຍາດກາຝາກໜອນແມງວັນ ຄຣີໂຊເມຍ ເບັດເຊຍນ້າ) |
| 21 | Paratuberculosis (ວັນນະໂຣກທຽມ) |
| 22 | Q fever (ພະຍາດຄິວຟີເວີ້) |
| 23 | Surra (Trypanosoma evansi) (ພະຍາດໂປໂຕຊົວ ຕີປາໂນໂຊມມາ ອີແວນຊີ) |
| 24 | Tularemia (ພະຍາດທູລາຣີເມຍ) |
| 25 | West Nile fever (ພະຍາດໄວຣັດເວັດນາຍ) |

### 2) ພະຍາດງົວ, ຄວາຍ (Bovidae Diseases)

| ລ/ດ | ລາຍຊື່ພະຍາດ |
|---|---|
| 1 | Bovine anaplasmosis (ພະຍາດກາຝາກໃນເລືອດງົວ ຄວາຍ ອານາປລາສະມາ) |
| 2 | Bovine babesiosis (ພະຍາດກາຝາກໃນເລືອດງົວ ຄວາຍ ບາບີເຊຍ) |
| 3 | Bovine genital campylobacteriosis (ພະຍາດຕິດຕໍ່ທາງເພດສຳພັນ ແຄມພີໂລແບັກເຕຣີອາ) |
| 4 | Bovine spongiform encephalopathy (ພະຍາດງົວບ້າ) |
| 5 | Bovine viral diarrhoea (ພະຍາດໄວຣັດເຈັບທ້ອງ ງົວ ຄວາຍ) |
| 6 | Enzootic bovine leucosis (ພະຍາດໄວຣັດ ງົວ ຄວາຍ ລີອູໂກຊີດ) |
| 7 | Haemorrhagic septicaemia (ພະຍາດເຕົ້າໂຮມເລືອດ) |
| 8 | Lumpy skin disease (ພະຍາດຜິວໜັງອັກເສບຕິດຕໍ່) |
| 9 | Contagious bovine pleuropneumonia (ພະຍາດເຫຍື່ອຫຸ້ມປອດອັກເສບ) |
| 10 | Infectious bovine rhinotracheitis/ infectious pustular vulvovaginitis (ພະຍາດພື້ງດັງອັກເສບຕິດຕໍ່) |
| 11 | Theileriosis (ພະຍາດກາຝາກໂປໂຕຊົວໃນເລືອດງົວ ຄວາຍ ທີເລີເລຍ) |
| 12 | Trichomonosis (ພະຍາດກາຝາກໂປໂຕຊົວໃນສັດປີກ ຕຣີໂຄໂມນັດ) |

### 3) ພະຍາດມ້າ (Equidae Diseases)

| ລ/ດ | ຊື່ພະຍາດ |
|---|---|
| 1 | Contagious equine metritis (ພະຍາດມົດລູກອັກເສບຕິດຕໍ່ມ້າ) |
| 2 | Dourine (ພະຍາດກາຝາກໂປໂຕຊົວ ທີປາໂນໂຊມາ ອີຄິວເປີດັມ ມ້າ) |
| 3 | Equine encephalomyelitis (Western) (ພະຍາດສະໝອງອັບເສບມ້າ (ຕາເວັນອອກ)) |
| 4 | Equine infectious anaemia (ພະຍາດເລືອດຈາງຕິດຕໍ່ມ້າ) |
| 5 | Equine piroplasmosis (ພະຍາດກາຝາກໂປໂຕຊົວກຸ່ມບາບີເຊຍ ແລະ ທີລາເລຍ ມ້າ) |
| 6 | Burkholderia mallei (Glanders) (ພະຍາດເບີໂຄເດີເລຍ ມອນລີ) |
| 7 | African horse sickness virus (ພະຍາດໄວຣັດໄຂ້ມ້າອາຟຣິກາ) |
| 8 | Equine herpesvirus-1 (Equine rhinopneumonitis) (ພະຍາດພື້ງດັງອັກເສບມ້າ (ໄວຣັດເຮີເປດສມ້າ)) |
| 9 | Equine viral arteritis virus (ພະຍາດໄວຣັດຂໍ້ອັກເສບມ້າ) |
| 10 | Equine influenza virus (ພະຍາດໄວຣັດໄຂ້ຫວັດມ້າ) |
| 11 | Venezuelan equine encephalomyelitis (ພະຍາດໄຂ້ສະໝອງອັກເສບມ້າເວັນເນຊູເອລ້າ) |

### 4) ພະຍາດໝູ (Suidae Diseases)

| ລ/ດ | ຊື່ພະຍາດ |
|---|---|
| 1 | African swine fever (ພະຍາດອະຫິວາໝູອາຟຣິກາ) |

| | |
|---|---|
| 2 | Classical swine fever (ພະຍາດອະຫິວາໝູ) |
| 3 | Porcine reproductive and respiratory syndrome (ພະຍາດຫູກ່ຳໝູ) |
| 4 | Porcine cysticercosis (ພະຍາດໂຕແປ) |
| 5 | Nipah virus encephalitis (ພະຍາດໄຂ້ສະໝອງອັກເສບ ໄວຣັດນິປ້າ) |
| 6 | Transmissible gastroenteritis (ພະຍາດກະເພາະລຳໄສ້ອັກເສບຕິດຕໍ່) |

**5) ພະຍາດ ແກະ, ແບ້ (Caprinae Diseases)**

| ລ/ດ | ຊື່ພະຍາດ |
|---|---|
| 1 | Caprine arthritis/encephalitis (ພະຍາດຂໍ້ ແລະ ສະໝອງອັກເສບແກະແບ້) |
| 2 | Contagious agalactia (ພະຍາດໄມໂຄປລາສມາ ອາກາແລັກເຕຍ) |
| 3 | Contagious caprine pleuropneumonia (ພະຍາດໄມໂຄປລາສມາ ຄາປຣິນປອດອັກເສບ) |
| 4 | Chlamydia abortus (Enzootic abortion of ewes, ovine chlamydiosis) (ພະຍາດແທ້ງລູກ ຊາມີເດຍແກະແບ້) |
| 5 | Peste des petits ruminants (ພະຍາດອະຫິວາສັດກ້ຽວເອື້ອງນ້ອຍ) |
| 6 | Maedi-visna (ພະຍາດປອດບວມ ແລະ ສະໝອງອັກເສບແກະແບ້ ມີດີ-ວິດສນາ) |
| 7 | Nairobi sheep disease (ພະຍາດໄວຣັດເຈັບທ້ອງແກະແບ້ ໃນໂຣບີ) |
| 8 | Ovine epididymitis (Brucella ovis) (ພະຍາດແທ້ງຕິດຕໍ່ ບຣູເຊວລ້າ ໂອວິດ) |
| 9 | Salmonellosis (*S.* abortusovis) (ພະຍາດຊາມອນເນວລ້າ ອາບໍຕູໂຊວິດ) |
| 10 | Scrapie (ພະຍາດສະໝອງອັກເສບ ແກະແບ້) |
| 11 | Sheep pox and goat pox (ພະຍາດໝາກສຸກແກະ, ແບ້) |

**6) ພະຍາດສັດປີກ (Aves Diseases)**

| ລ/ດ | ຊື່ພະຍາດ |
|---|---|
| 1 | Avian chlamydiosis (ພະຍາດຄຣາມີເດຍ ສັດປີກ) |
| 2 | Avian infectious bronchitis (ພະຍາດຫຼອດລົມອັກເສບຕິດຕໍ່) |
| 3 | Avian infectious laryngotracheitis (ພະຍາດກ່ອງສຽງອັກເສບຕິດຕໍ່) |
| 4 | Duck virus hepatitis (ພະຍາດຕັບອັກເສບເປັດ) |
| 5 | Fowl typhoid and pullorum disease (ພະຍາດໄຂ້ທໍລະພິດສັດປີກ) |
| 6 | High pathogenicity avian influenza (ພະຍາດໄຂ້ຫວັດສັດປີກ) |
| 7 | low pathogenicity avian influenza viruses transmission to humans (ພະຍາດໄຂ້ຫວັດສັດປີກຊະນິດບໍ່ຮ້າຍແຮງທີ່ສາມາດຕິດຕໍ່ສູ່ຄົນ) |
| 8 | Infection with Mycoplasma gallisepticum (Avian mycoplasmosis) (ພະຍາດໄມໂຄປລາສມາ ກາລິເຊັບຕິກຸມ ສັດປີກ) |
| 9 | Infection with Mycoplasma synoviae (Avian mycoplasmosis) (ພະຍາດໄມໂຄປລາສມາ ຊິໂນເວຍ ສັດປີກ) |

| | |
|---|---|
| 10 | Newcastle disease (ພະຍາດນິວຄາເຊີນ) |
| 11 | Gumboro disease (ພະຍາດກຳໂບໂລ) |
| 12 | Pullorum disease (ພະຍາດຊາມອນເນລລ້າ ໂປນໂລຣັມ ສັດປີກ) |
| 13 | Turkey rhinotracheitis (ພະຍາດກ່ອງດັງອັກເສບໄກ່ງວງ) |

### 7) ພະຍາດກະຕ່າຍ (Leporidae Diseases)

| ລ/ດ | ຊື່ພະຍາດ |
|---|---|
| 1 | Myxomatosis ພະຍາດມີໂຊມາ ຫຼື ໝາກສຸກກະຕ່າຍ |
| 2 | Rabbit haemorrhagic disease ພະຍາດໄວຣັດ ຄາລີຊີ ເຕົ້າໂຮມເລືອດກະຕ່າຍ |

### 8) ພະຍາດເຜິ້ງ (Apidae Dieases)

| ລ/ດ | ຊື່ພະຍາດ |
|---|---|
| 1 | Acarapis woodi (ພະຍາດກາຝາກພາຍໃນເຜິ້ງ ອາກາລາປິດ ວູດີ້) |
| 2 | Paenibacillus larvae (American foulbrood) (ພະຍາດແບັກເຕີລີ້ ພີນີບາຊີວຣັດ ເຜິ້ງ) |
| 3 | Melissococcus plutonius (European foulbrood) (ພະຍາດແບັກເຕີລີ້ ເມລິດໂຊຄອກ ຄັດສ ປລູຕອນ ເຜິ້ງ) |
| 4 | Aethina tumida (Small hive beetle) (ກາຝາກປີກແຂງ ອາທີນ້າ ຕູມີດາ ເຜິ້ງ) |
| 5 | Tropilaelaps spp (ພະຍາດກາຝາກ ກຸ່ມ ໂທປີລີແລັບ ເຜິ້ງ) |
| 6 | Varroosis (ພະຍາດກາຝາກວາຣົວ) |

### 9) ພະຍາດສັດນ້ຳ (Aquatic animal diseases)

| ລ/ດ | ລາຍຊື່ພະຍາດ |
|---|---|
| 1 | Abalone viral ganglioneuritis (AVG) (ພະຍາດໄວຣັດໃນຫອຍ) |
| 2 | Acute hepatopancreatic necrosis (ພະຍາດຕັບວາຍໃນກຸ້ງ) |
| 3 | Bonamiosis (B.exitiosa) (ພະຍາດກາຝາກໂບນາເມຍໃນຫອຍ) |
| 4 | Bonamiosis (B.ostreae) ( ພະຍາດກາຝາກໂບນາເມຍໃນຫອຍນາງລົມ) |
| 5 | Chytridiomycosis (Batrachochytrium dendrobatidis) (ເຊື້ອຣາໃນສັດເຄິ່ງບົກເຄິ່ງນ້ຳ) |
| 6 | Chytridiomycosis (Batrachochytrium salmandrivirans) (ເຊື້ອຣາຜິວໜັງໃນສັດເຄິ່ງບົກເຄິ່ງນ້ຳ) |
| 7 | Crayfish plague (ພະຍາດເກີດຈາກໄວຣັດໃນກັ້ງ) |
| 8 | Decapod iridescent virus 1 (ພະຍາດເກີດຈາກໄວຣັດໃນກຸ້ງ) |
| 9 | Enzootic hematopoietic (ພະຍາດໃນເມັດເລືອດ) |
| 10 | Epizootic ulcerative syndrome (ພະຍາດທີ່ເກີດຈາກເຊື້ອຣາທີ່ມີບາດແຜ, ເລືອດອອກຕາມຜິວໜັງໃນປາ) |
| 11 | Gyrodactylosis (G. salaris) (ພະຍາດປິງໃສໃນປານ້ຳຈືດ) |

| | |
|---|---|
| 12 | Infection with infectious salmon anemia virus (ISAV) (ເຊື້ອໄວຣັດທີ່ເກີດຈາກເລືອດຈາງໃນປາແຊວມອນ) |
| 13 | Tilapia lake virus disease (TiLV) (ການຕິດເຊື້ອໄວຣັດໃນປານິນ) |
| 14 | Infectious haematopoietic necrosis virus (IHNV) (ພະຍາດກ້ອນເນື້ອເມັດເລືອດຕິດເຊື້ອໃນປາ) |
| 15 | Infectious hypodermal and hematopoietic necrosis virus (IHHNV) (ພະຍາດຕິດເຊື້ອໄວຣັດໄອເອັສເອັສເອັນ ໃນກຸ້ງ) |
| 16 | Infectious myonecrosis (ພະຍາດກ້າມຊີ້ນຂາວ ຫຼື ກ້າມຊີ້ນຕາຍ) |
| 17 | Koi herpesvirus diease (ພະຍາດທີ່ເກີດຈາກໄວຣັດໃນຕະກຸນປາຄາບ ຫຼື ປາສວຍງາມ) |
| 18 | Marteillosis (ພະຍາດມາຣເຕີສໂລຊິສ) |
| 19 | Necrotising hepatopancreatitis (NHP) (ພະຍາດກຸ້ງຕາຍດ່ວນ) |
| 20 | Perkinsosis (P.marinus) (ພະຍາດກາຝາກໃນຫອຍນາງລົມ) |
| 21 | Perkinsosis (P.olseni) (ພະຍາດກາຝາກໃນຫອຍລາຍ) |
| 22 | Ranavirosis (ພະຍາດຣານາໄວໂຣຊິສໃນສັດນ້ຳຈືດ) |
| 23 | Red seabream iridoviral disease (ການຕິດເຊື້ອໄວຣັດ ອີຣິໂດໄວຣັນໃນປານ້ຳກ່ອຍ) |
| 24 | Salmonid alphavirus infection (ການຕິດເຊື້ອໄວຣັດຕັບອ່ອນປາແຊວມອນ) |
| 25 | Spring viraemia of carp (SVC) (ເຊື້ອໄວຣັດໃນປາຄາບ) |
| 26 | Taura syndrome (YS) (ພະຍາດໄວຣັດໂທຣາຊິນໂດຣມໃນກຸ້ງຂາວ) |
| 27 | Viral haemorrhagic septicaemia (VHS) (ພະຍາດຕິດເຊື້ອທາງລະບົບທີ່ຮຸນແຮງຂອງປາ) |
| 28 | White spot disease (WSD) (ພະຍາດໂຕແດງດວງຂາວໃນກຸ້ງທະເລ) |
| 29 | White tail disease (MrNV) (ພະຍາດຫາງຂາວໃນລູກກຸ້ງ) |
| 30 | Withering abalone syndrome (WS) (ພະຍາດທີ່ເກີດຈາກແບກທີເຣຍໃນຫອຍ) |
| 31 | Yellow head disease (YHV) (ພະຍາດໄວຣັດຫົວເຫຼືອງໃນກຸ້ງ) |

2. ມອບໃຫ້ກົມລ້ຽງສັດ ແລະ ການປະມົງ ເປັນໃຈກາງໃນການປະສານສົມທົບ ກັບທຸກພາກສ່ວນທີ່ກ່ຽວຂ້ອງ ເພື່ອສ້າງລະບົບການເຝົ້າລະວັງ, ຕິດຕາມ ແລະ ໂຄສະນາເຜີຍແຜ່ ໃຫ້ແກ່ປະຊາຊົນ, ຊາວກະສິກອນ, ຜູ້ປະກອບການຮັບຊາບ ແລະ ໃຫ້ການຮ່ວມມື, ຖ້າກໍລະນີ ມີການເກີດລະບາດຂອງພະຍາດສັດໃດໜຶ່ງ ໃຫ້ລາຍງານຕໍ່ ກົມລ້ຽງສັດ ແລະ ການປະມົງຊາບ ເພື່ອລາຍງານຕໍ່ ອົງການສຸຂະພາບສັດສາກົນ ຢ່າງທັນການ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງບັນດາທ່ານເພື່ອຮັບຊາບ ແລະ ພ້ອມກັນຈັດຕັ້ງປະຕິບັດ ຕາມເນື້ອໃນແຈ້ງການ ສະບັບນີ້ ໃຫ້ໄດ້ຮັບຜົນດີ.

**ລັດຖະມົນຕີ**

ກະຊວງກະສິກຳ ແລະ ປ່າໄມ້

ລັດຖະມົນຕີ

**ປອ. ເພັດ ພົມພິພັກ**